ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກໍາ

# ຄູ່ມືແນະນໍາ

# ພັນທະ ແລະ ໜ້າທີ່ຂອງສະມາຊິກກຸ່ມ



# ສາລະບານ

ໜ້າ

I. ຄວາມໝາຍ, ຄວາມສຳຄັນຂອງພັນທະ ແລະ ໜ້າທີ່ຂອງສະມາຊິກກຸ່ມ .....1
II. ພັນທະ ແລະ ໜ້າທີ່ຂອງສະມາຊິກກຸ່ມ.........................................2
2.1. ເຊື່ອມຊຶມ ແລະ ປະຕິບັດແນວທາງຂອງພັກ, ນະໂຍບາຍ, ລະບຽບກົດໝາຍຂອງລັດດ້ານວຽກງານກະສິກຳ.....................................3
2.2. ຮັກສາຄວາມສາມັກຄີລະຫວ່າງສະມາຊິກກຸ່ມດ້ວຍກັນ;.................4
2.3. ດຳເນີນການຜະລິດ, ບົວລະບັດຮັກສາ ຕິດພັນກັບການນຳໃຊ້ເຕັກນິກວິທະຍາການອັນໃໝ່;..........................................................4
2.4. ເຂົ້າຮ່ວມການຝຶກອົບຮົມຍົກລະດັບຄວາມຮູ້ ທາງດ້ານການປູກ, ການລ້ຽງ ແລະ ການປຸງແຕ່ງໃຫ້ສູງຂຶ້ນເທື່ອລະກ້າວ;..........................4
2.5. ເລືອກຕັ້ງ ແລະ ລົງສະໝັກຮັບເລືອກຕັ້ງ ເປັນກຳມະການບໍລິຫານກຸ່ມ.........................................................................5
2.6. ສະເໜີເປີດກອງປະຊຸມດ່ວນ(ສຸກເສີນ)ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດລະບຽບຂອງກຸ່ມ;..........................................................6
2.7. ຮ້ອງຟ້ອງຕໍ່ສານກ່ຽວກັບການກະທຳຂອງກຳມະການບໍລິຫານ ທີ່ເປັນການລະເມີດຕໍ່ສິດ...........................................................7
2.8. ສະມາຊິກທຸກຄົນມີສິດສະເໜີ ໃຫ້ມີການກວດກາຊັບສິນບັດ ແລະບັນຊີ - ການເງິນ..........................................................7
2.9. ການລາອອກຈາກການເປັນສະມາຊິກກຸ່ມ ................................8
2.10. ປະຕິບັດສິດ ແລະ ໜ້າທີ່ອື່ນໆ...ຕາມທີ່ໄດ້ກຳນົດໄວ້ໃນລະບຽບຂອງກຸ່ມ.........................................................................9

# ຄຳນຳ

ຄູ່ມືສະບັບນີ້ສ້າງຂຶ້ນເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງຊາວກະສິກອນ, ອົງການຈັດຕັ້ງຊາວກະສິກອນໃນຂອບເຂດທົ່ວປະເທດໃນການຍົກລະດັບຄວາມຮູ້, ຄວາມເຂົ້າໃຈ ກ່ຽວກັບ ພັນທະແລະໜ້າທີ່ຂອງສະມາຊິກກຸ່ມ ແນໃສ່ໃຫ້ມີການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ, ມີປະສິດທິຜົນສູງ.

ຄູ່ມືສະບັບນີ້ໄດ້ມີການຄັດຈ້ອນ, ສັງລວມຈາກບັນດານິຕິກຳກ່ຽວຂ້ອງ, ເອກະສານດ້ານວິຊາການ ແລະ ປະສົບການຕົວຈິງໃນພາກປະຕິບັດຂອງຫຼາຍພາກສ່ວນ ໂດຍມີການເຂົ້າຮ່ວມປະກອບຄຳຄິດຄຳເຫັນ ຈາກຕົວແທນຂອງຊາວກະສິກອນໃນຫຼາຍທ້ອງຖິ່ນເປັນຕົ້ນຈາກແຂວງວຽງຈັນ ແລະ ກຸ່ມຕົວແທນຊາວກະສິກອນລາວ.

# ພັນທະ ແລະ ໜ້າທີ່ຂອງສະມາຊິກກຸ່ມ

## I. ຄວາມໝາຍ, ຄວາມສຳຄັນ ພັນທະ ແລະ ໜ້າທີ່ຂອງສະມາຊິກກຸ່ມ.

### 1. ຄວາມໝາຍ:

ໝາຍເຖິງ ໜ້າທີ່ ແລະ ຄວາມຮັບຜິດຊອບຂອງສະມາຊິກທີ່ຈະຕ້ອງໄດ້ປະຕິບັດຕາມກົດລະບຽບຂອງກຸ່ມ ແລະ ຕາມການມອບໝາຍຂອງຄະນະກຳມະການບໍລິຫານກຸ່ມ.

### 2. ຄວາມສຳຄັນ:

ສະມາຊິກຕ້ອງໄດ້ມີການປະກອບສ່ວນ ແລະ ສະມາຊິກທຸກຄົນຕ້ອງນຳໃຊ້ສິດ, ຮັກສາຜົນປະໂຫຍດຂອງຕົນ ແລະ ກຸ່ມ.

ຖ້າສະມາຊິກບໍ່ປະຕິບັດຕາມ ພັນທະ ແລະ ໜ້າທີ່ ຂອງຕົນຈະເຮັດໃຫ້ຜົນຜະລິດ ບໍ່ໄດ້ຕາມເປົ້າ ໝາຍ ແລະ ຖ້າບໍ່ມີການປະກອບພັນທະ ຫຼື ເຄື່ອນໄຫວຕາມວຽກງານຕ່າງໆທີ່ກຸ່ມວາງອອກກໍ່ຈະເຮັດໃຫ້ການເຄື່ອນໄຫວຂອງກຸ່ມ ບໍ່ມີຄວາມເຂັ້ມແຂງ ແລະ ບໍ່ປະສົບຜົນສຳເລັດ.

## II. ພັນທະ ແລະ ໜ້າທີ່ຂອງສະມາຊິກກຸ່ມ

1. ເຊື່ອມຊຶມ ແລະ ປະຕິບັດແນວທາງຂອງພັກ, ນະໂຍບາຍ, ລະບຽບກົດໝາຍຂອງລັດດ້ານວຽກງານກະສິກຳ,ກົດລະບຽບຂອງກຸ່ມ ແລະ ການຊີ້ນຳຂອງກຳມະການບໍລິຫານກຸ່ມ;
2. ຮັກສາຄວາມສາມັກຄີລະຫວ່າງສະມາຊິກກຸ່ມດ້ວຍກັນ;
3. ດຳເນີນການຜະລິດ, ບົວລະບັດຮັກສາ ຕິດພັນກັບການນຳໃຊ້ເຕັກນິກວິທະຍາການອັນໃໝ່
4. ເຂົ້າຮ່ວມການຝຶກອົບຮົມຍົກລະດັບຄວາມຮູ້ ທາງດ້ານການປູກ, ການລ້ຽງ ແລະ ການປຸງແຕ່ງໃຫ້ສູງຂຶ້ນເທື່ອລະກ້າວ;
5. ເລືອກຕັ້ງ ແລະ ລົງສະໝັກຮັບເລືອກຕັ້ງ ເປັນກຳມະການບໍລິຫານກຸ່ມ ຫຼື ກຳມະການກວດກາກຸ່ມ ລວມທັງການເຂົ້າຮ່ວມກອງປະຊຸມ, ລົງຄະແນນສຽງ, ສະເໜີ ແລະ ປະກອບຄຳເຫັນດ້ານຕ່າງໆຂອງກຸ່ມ;
6. ສະເໜີເປີດກອງປະຊຸມດ່ວນ (ສຸກເສີນ) ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດລະບຽບຂອງກຸ່ມ;
7. ຮ້ອງຟ້ອງຕໍ່ສານ ກ່ຽວກັບການກະທຳຂອງກຳມະການບໍລິຫານ ທີ່ເປັນການລະເມີດຕໍ່ສິດ ແລະ ສ້າງຄວາມເສຍຫາຍແກ່ຜົນປະໂຫຍດຂອງຕົນກໍຄືຂອງກຸ່ມທີ່ຕົນເປັນສະມາຊິກ;
8. ສະມາຊິກທຸກຄົນມີສິດສະເໜີ ໃຫ້ມີການກວດກາຊັບສິນບັດ ແລະ ບັນຊີການເງິນຂອງກຸ່ມ ໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນ ໂດຍອີງໃສ່ກົດລະບຽບຂອງກຸ່ມທີ່ໄດ້ກຳນົດໄວ້;
9. ການລາອອກຈາກການເປັນສະມາຊິກກຸ່ມ ໂດຍຜ່ານການພິຈາລະນາສິ່ງຄືນຮຸ້ນ ຫຼື ຜົນປະໂຫຍດອື່ນໆ ຕາມກົດລະບຽບຂອງກຸ່ມ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບຂອງກຸ່ມ;

## 2.1. ເຊື່ອມຊຶມ ແລະ ປະຕິບັດແນວທາງຂອງພັກ, ນະໂຍບາຍ, ລະບຽບກົດໝາຍຂອງລັດດ້ານວຽກງານກະສິກຳ, ກົດລະບຽບຂອງກຸ່ມ ແລະ ການຊີ້ນຳ ຂອງກຳມະການບໍລິຫານຂອງກຸ່ມ.

ສະມາຊິກຂອງກຸ່ມຈະຕ້ອງໄດ້ສຶກສາຄົ້ນຄວ້າເພື່ອໃຫ້ເຂົ້າໃຈແຈ້ງ



ແລະ ປະຕິບັດກ່ຽວກັບລະບຽບກົດໝາຍຂອງກຸ່ມທີ່ໄດ້ວາງອອກ ແລະ ຕາມຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍການສ້າງຕັ້ງ ແລະ ຄຸ້ມຄອງກຸ່ມຜູ້ຜະລິດກະສິກຳ ເລກທີ 2984/ກປ ແລະ ບັນດາເອກະສານຕ່າງໆທີ່ກ່ຽວຂ້ອງກັບກຸ່ມຜະລິດກະສິກຳ ລວມທັງເຄື່ອນໄຫວ ຕາມການຊີ້ນຳຂອງຄະນະກຳມະການບໍລິຫານກຸ່ມ ຢ່າງມີສ່ວນຮ່ວມ ແລະ ເປັນເອກະພາບກັນ.

ທຸກຄົນທີ່ເປັນສະມາຊິກສາມາດຊ່ວຍເຫຼືອເຊິ່ງກັນ ແລະ ກັນ ບໍ່ວ່າຈະເປັນທາງດ້ານເຕັກນິກ, ມີການປະກອບສ່ວນພັນທະນຳກັນທາງດ້ານທຶນຮອນ ແລະ ເຄື່ອນໄຫ່ວອອກແຮງງານຮ່ວມກັນ ພາຍໃນກຸ່ມ ແລະ ອອກຄວາມຄິດເຫັນແກ້ໄຂບັນຫາຮ່ວມກັນໃຫ້ມີແນວຄວາມຄິດເປັນອັນນຶ່ງ ອັນດຽວກັນ ບົນພື້ນຖານຄວາມເປັນເອກະ



## 2.3. ດຳເນີນການຜະລິດ, ບົວລະບັດຮັກສາ ຕິດພັນກັບການນຳໃຊ້ເຕັກນິກວິທະຍາການອັນໃໝ່:

ໃນການດຳເນີນການຜະລິດສະມາຊິກທຸກຄົນ ຈະຕ້ອງບົວລະບັດຮັກສາກິດຈະກຳຂອງຕົນເອງໃຫ້ເກີດຜົນປະໂຫຍດສູງສຸດ ແລະ ສາມາດນຳໃຊ້ເຕັກນິກອັນໃໝ່ ທີ່ແທດເໝາະກັບແຕ່ລະທ້ອງຖິ່ນຂອງຕົນ ເພື່ອພັດທະນາການຜະລິດຂອງຕົນເອງໃຫ້ມີປະສິດທິພາບ ແລະ ຄຸນນະພາບ ທີ່ດີທີ່ສຸດ ເພື່ອສ້າງລາຍຮັບ ໃຫ້ແກ່ເສດຖະກິດຄອບຄົວ ແລະ ພາຍໃນກຸ່ມໃຫ້ມີຄວາມຍືນຍົງ.



ຕົວຢ່າງ: ຖ້າຫາກວ່າກຸ່ມໄດ້ຮັບການຊ່ວຍເຫຼືອຈາກພາກລັດ ຫຼື ໂຄງການໃດໜຶ່ງກ່ຽວກັບການສ້າງຄວາມເຂັ້ມແຂງເຊັ່ນ: ການຝຶກອົບຮົມ ວິຊາການດ້ານການປູກ, ການລ້ຽງ ແລະ ເຕັກນິກອັນໃໝ່ອື່ນໆ, ຜູ້ທີ່ເຂົ້າຮ່ວມຝຶກອົບຮົມພາຍໃນກຸ່ມ ຈະຕ້ອງນຳມາປະຕິບັດໃຫ້ແທດເໝາະກັບກິດຈະກຳຂອງຕົນເອງ.

## 2.4. ເຂົ້າຮ່ວມການຝຶກອົບຮົມຍົກລະດັບຄວາມຮູ້ ທາງດ້ານການປູກ, ການລ້ຽງ ແລະ ການປຸງແຕ່ງໃຫ້ສູງຂຶ້ນເທື່ອລະກ້າວ:

ເພື່ອໃຫ້ຕົນເອງສາມາດນຳເອົາຄວາມຮູ້ທາງດ້ານວິຊາການ ນຳໄປໃຊ້ໃຫ້ເກີດຜົນປະໂຫຍດສູງສຸດແກ່ສະມາຊິກພາຍໃນກຸ່ມ ສະນັ້ນຖ້າມີການຝຶກອົບຮົມ ກຸ່ມຕ້ອງໄດ້ຮຽກສະມາຊິກພາຍໃນກຸ່ມມາເຂົ້າຮ່ວມຮັບຟັງເພື່ອໃຫ້ທຸກຄົນໄດ້ນຳໃຊ້ສິດສະເໝີພາບ ແລະ ຮັບຄວາມຮູ້ ເພື່ອຍົກລະດັບຄວາມສາມາດໄປພ້ອມໆກັນ.



ການປະສົມພັນທຽມ



ການເຮັດຝຸ່ນບົ່ມ

ຕົວຢ່າງ: ມີການຝຶກອົບຮົມ ແລະ ທັດສະນະສຶກສາຕ່າງໆ ຖ້າຫາກວ່າມີຕົວແທນສະມາຊິກກຸ່ມໄປ ຜູ້ນັ້ນຕ້ອງໄດ້ມາຖ່າຍທອດຄວາມຮູ້ ແລະ ບົດຮຽນທີ່ຕົນເອງໄດ້ໄປພົບພໍ້ມາໃຫ້ສະມາຊິກພາຍໃນກຸ່ມໄດ້ຮູ້ນຳ.

### 2.5. ເລືອກຕັ້ງ ແລະ ລົງສະໝັກຮັບເລືອກຕັ້ງ ເປັນກຳມະການບໍລິຫານກຸ່ມ ຫຼື ກຳມະການກວດກາກຸ່ມ ລວມທັງການເຂົ້າຮ່ວມກອງປະຊຸມ,ລົງຄະແນນສຽງ,ສະເໜີ ແລະ ປະກອບ ຄຳເຫັນດ້ານຕ່າງໆຂອງກຸ່ມ.

ສະມາຊິກກຸ່ມທຸກຄົນ ມີສິດໃນການຕັດສິນໃຈເລືອກຕັ້ງ, ລົງຄະແນນສຽງ ແບບປະຊາທິປະໄຕ ແລະ ມີສິດລົງສະໝັກຮັບເລືອກຕັ້ງເປັນຄະນະບໍລິຫານງານກຸ່ມ ຫຼື ຕຳແໜ່ງອື່ນໆ ພາຍໃນໂຄງຮ່າງການຈັດຕັ້ງກຸ່ມ.



**ການນັບຄະແນນສຽງ ທີ່ໄດ້ຮັບການເລືອກຕັ້ງຈາກສະມາຊິກກຸ່ມ**

ຕໍ່ກອງປະຊຸມກຸ່ມ ສະມາຊິກສາມາດເຂົ້າຮ່ວມ, ສະເໜີ, ປະກອບຄາຄິດເຫັນຂອງຕົນເຂົ້າໃນການແກ້ໄຂບັນຫາ.

ຕົວຢ່າງ: ປະຊຸມການວາງແຜນການຜະລິດຮ່ວມກັນເພື່ອໃຫ້ມີສ່ວນຮ່ວມໃນການຕັດສິນໃຈຮ່ວມກັນຢ່າງເປັນເອກະພາບ.

## 2.6. ສະເໜີເປີດກອງປະຊຸມດ່ວນ(ສຸກເສີນ) ຕາມເງື່ອນໄຂທີ່ກໍານົດໄວ້ໃນກົດລະບຽບຂອງກຸ່ມ:



ສະມາຊິກກຸ່ມ ສາມາດສະເໜີໃຫ້ມີການປະຊຸມກັນ ໃນເມື່ອທີ່ມີບັນຫາໃດໜຶ່ງ ທີ່ເກີດຂຶ້ນຢ່າງກະທັນຫັນເຊັ່ນ: ຈາກໄພທໍາມະຊາດ, ມີການລະບາດຂອງພະຍາດສັດ, ແມງໄມ້ສັດຕູພືດ ຫຼື ບັນຫາຕ່າງໆ ທີ່ເກີດຂຶ້ນກັບການຜະລິດຂອງສະມາຊິກກຸ່ມ ເພື່ອຊອກຫາວິທີແກ້ໄຂ ແລະ ປ້ອງກັນຮ່ວມກັນ **ກອງປະຊຸມດ່ວນ(ສຸກເສີນ) ນີ້ຈະບໍ່ສາມາດກໍານົດເວລາໄດ້.**

**2.7. ຮ້ອງຟ້ອງຕໍ່ສານ ກ່ຽວກັບການກະທຳຂອງການະການບໍລິຫານ ທີ່ເປັນການລະເມີດຕໍ່ສິດ ແລະ ສ້າງຄວາມເສຍຫາຍແກ່ຜົນປະໂຫຍດຂອງຕົນກໍຄືຂອງກຸ່ມທີ່ຕົນເປັນສະມາຊິກ:**

ໃນກໍລະນີທີ່ກຳມະການບໍລິຫານກຸ່ມ **ບໍ່ມີຄວາມໂປ່ງໃສ ຫຼື ບໍ່ປະຕິບັດຕາມໜ້າທີ່ຂອງຕົນ** ທີ່ໄດ້ລະບຸໄວ້ຕາມລະບຽບທີ່ກຳນົດໄວ້ຕາມ <u>ມາດຕາ 15</u>: ສິດ ແລະ ໜ້າທີ່ຂອງຄະນະກຳມະການບໍລິຫານກຸ່ມ ຂອງລັດຖະມົນຕີວ່າດ້ວຍການສ້າງຕັ້ງ ແລະ ຄຸ້ມຄອງກຸ່ມຜູ້ຜະລິດກະສິກຳ ເລກທີ 2984/ກປ ຫຼື ມີການ ສໍ້ໂກງເອົາຜົນປະໂຫຍດສ່ວນ ລວມມາເປັນຂອງຕົນ ແລະ ອື່ນໆ ທີ່ລະເມີດຕໍ່ສິດ ແລະ ຜົນປະໂຫຍດຂອງກຸ່ມ ສະມາຊິກມີສິດຮ້ອງຟ້ອງຕໍ່ສານໄດ້.

**2.8. ສະມາຊິກທຸກຄົນມີສິດສະເໜີ ໃຫ້ມີການກວດກາຊັບສົມບັດ ແລະ ບັນຊີການເງິນຂອງກຸ່ມ ໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນ ໂດຍອີງໃສ່ກົດລະບຽບຂອງກຸ່ມ:**

⇒ **<u>ຕົວຢ່າງ:</u>** ກຸ່ມກຳນົດວ່າຈະຕ້ອງມີການປະຊຸມກັນເຊັ່ນ: ກອງປະຊຸມປະຈຳເດືອນ, ສາມເດືອນ, ຫົກເດືອນ,ປະຈຳປີ ແລະ ກອງປະຊຸມສຸກເສີນ ເຊິ່ງໃນນັ້ນ ການປະຊຸມປະຈຳປີແມ່ນຈະໄດ້ມີການສະຫຼຸບວຽກລວມ, ຮ່ວມກັນວາງແຜນການຜະລິດ ແລະ ກຳນົດຂໍ້ຄົງຄ້າງຂອງກຸ່ມ ມີການສະຫຼຸບບັນຊີການເງິນ ແລະ ກິດຈະກຳ ຕ່າງໆຂອງກຸ່ມ

⇒ **ຖ້າຫາກວ່າ:** ບໍ່ມີການສະຫຼຸບບັນຊີ ຫຼື ບັນຊີບໍ່ຈະແຈ້ງ ແລະ ເຫັນສິ່ງໃດທີ່ຜິດປົກກະຕິໃນການນຳໃຊ້ອຸປະກອນ ຫຼື ຊັບສິນບັດຂອງກຸ່ມ ສະມາຊິກກໍ່ສາມາດສະເໜີໃຫ້ ມີການກວດກາຊັບສິນບັດ ແລະ ບັນຊີການເງິນຂອງກຸ່ມຄືນ.

## 2.9. ການລາອອກຈາກການເປັນສະມາຊິກກຸ່ມ ໂດຍຜ່ານການພິຈາລະນາສິ່ງຄືນຮຸ້ນ ຫຼື ຜົນປະໂຫຍດອື່ນໆ ຕາມກົດລະບຽບຂອງກຸ່ມ.



ການຮຽກປະຊຸມເພື່ອພິຈາລະນາການລາອອກ

ເຊິ່ງສະມາຊິກ ຈະຕ້ອງໄດ້ຂຽນໃບສະເໜີ ໂດຍຈະມີການພິຈາລະນາຈາກກອງປະຊຸມຂອງກຸ່ມ, ໃນການພິຈາລະນາ ການສິ່ງຮຸ້ນຄືນ ແລະ ຜົນປະໂຫຍດອື່ນໆ ຕາມກົດ

**ແຕ່ວ່າ:** ສະມາຊິກຄົນດັ່ງກ່າວມີເຫດຜົນພຽງພໍ ແລະ ບໍ່ໄດ້ເຮັດຜິດກົດລະບຽບຂອງກຸ່ມເຊັ່ນ: ຍ້າຍຖິ່ນຖານ, ການເສຍຊີວິດ, ເປັນບ້າ-ເສຍຈິດ ແລະ ບໍ່ມີແຮງງານ ໃນການປະກອບສ່ວນ ການດຳເນີນກິດຈະກຳຕ່າງໆຮ່ວມກັບກຸ່ມ ແລ້ວທາງຄະນະກຳມະການບໍລິຫານງານກຸ່ມ ສະເໜີຕໍ່ກອງປະຊຸມ ພິຈາລະນາຕາມລະບຽບຂອງກຸ່ມ.

## 2.10. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບຂອງກຸ່ມ:

- ສະມາຊິກທຸກຄົນ ຈະຕ້ອງໄດ້ປະຕິບັດສິດ ແລະ ໜ້າທີ່ຂອງຕົນຕາມລະບຽບກົດໝາຍຂອງບ້ານເມືອງ ແລະ ລະບຽບຂອງກຸ່ມ ໂດຍອີງຕາມຄວາມເປັນເອກະພາບ ຂອງກອງປະຊຸມ ແລະ ຕັດສິນໃຈໃນການກຳນົດກິດຈະກຳຕ່າງໆຮ່ວມກັນ.
- ສະມາຊິກທຸກຄົນ ມີສິດໄດ້ຮັບນະໂຍບາຍຜົນປະໂຫຍດຮ່ວມກັນ ພ້ອມທັງ ໄດ້ຮັບການບໍລິການຈາກພາກລັດສິ່ງເສີມໃຫ້ແກ່ກຸ່ມເຊັ່ນ: ການເຂົ້າຮ່ວມຝຶກອົບຮົມ ແລະ ທັດສະນະສຶກສາຕ່າງໆທີ່ເປັນການພັດທະນາ ແລະ ເສີມສ້າງຄວາມຮູ້ຄວາມສາມາດຂອງສະມາຊິກພາຍໃນກຸ່ມ.

## ຕົວຢ່າງ:

### ກຸ່ມຜູ້ຜະລິດກະສິກຳ ດ້ານການຜະລິດເມັດພັນເຂົ້າບ້ານ ໂພນສະອາດ ເມືອງ ໄຊບົວທອງ ແຂວງ ຄຳມ່ວນ

### ໝວດທີ 2: ສະມາຊິກກຸ່ມ

**ມາດຕາ 6:** ສະມາຊິກກຸ່ມ ແມ່ນບຸກຄົນທີ່ບັນລຸນິຕິພາວະ, ມີສຳມະໂນຄົວ ແລະ ດຳລົງຊີວິດຢູ່ໃນທ້ອງຖິ່ນທີ່ກຸ່ມນັ້ນດຳເນີນຢູ່ ແລະ ໄດ້ສະໝັກເຂົ້າເປັນສະມາຊິກຕາມກົດລະບຽບຂອງກຸ່ມ;
ສະມາຊິກແຕ່ລະຄົນຕ້ອງຖືຮຸ້ນຢ່າງໜ້ອຍ ໜຶ່ງຮຸ້ນ ແຕ່ບໍ່ໃຫ້ເກີນຊາວສ່ວນຮ້ອຍ ຂອງຈານວນຮຸ້ນທັງໝົດ ແລະ ປະຕິບັດຕາມຫຼັກການ ໜຶ່ງຄົນມີໜຶ່ງສຽງໃນການລົງຄະແນນ.

ການເປັນສະມາຊິກກຸ່ມຈະສິ້ນສຸດລົງກໍ່ຕໍ່ເມື່ອ: ເສຍຊີວິດ, ເປັນບ້າ-ເສຍຈິດ, ສະໝັກໃຈລາອອກ, ລະເມີດກົດລະບຽບກຸ່ມຢ່າງຮ້າຍແຮງ ແລະ ບໍ່ຖອກຮຸ້ນຕາມເງື່ອນໄຂທີ່ກຳນົດໄວ້ໃນລະບຽບຂອງກຸ່ມ.

**ມາດຕາ 7: ສະມາຊິກກຸ່ມ ມີສິດ ແລະ ໜ້າທີ່ ດັ່ງລຸ່ມນີ້:**

1. ເຊື່ອມນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດດ້ານວຽກງານກະສິກຳໃຫ້ໜັກແໜ້ນ;
2. ເຂົ້າຮ່ວມຝຶກອົບຮົມຍົກລະດັບຄວາມຮູ້ທາງດ້ານການປູກ,ການລ້ຽງ ແລະ ການປຸງແຕ່ງ ໃຫ້ສູງຂຶ້ນເທື່ອລະກ້າວ;
3. ດຳເນີນການຜະລິດ, ປົວລະບັດຮັກສາຕິດພັນກັບ ການນຳໃຊ້ເຕັກນິກວິທະຍາການອັນໃໝ່;
4. ສະໝັກຮັບເລືອກຕັ້ງເປັນຄະນະກຳມະການບໍລິຫານກຸ່ມ;
5. ເລືອກຕັ້ງຫຼືປົດຕຳແໜ່ງກຳມະການບໍລິຫານ ຫຼື ຜູ້ກວດກາ;
6. ເລືອກຕັ້ງຫຼືປົດຕຳແໜ່ງຜູ້ກວດສອບບັນຊີຕາມການສະເໜີຂອງຜູ້ກວດກາ.
7. ປະຕິບັດກົດລະບຽບກົດໝາຍ, ກົດລະບຽບຂອງກຸ່ມ ແລະ ການຊີ້ນຳຂອງຄະນະກຳມະການບໍລິຫານ;
8. ຮ້ອງຂໍໃຫ້ເປີດກອງປະຊຸມວິສາມັນຕາມເງື່ອນໄຂທີ່ໄດ້ບົ່ງບອກໄວ້ໃນລະບຽບການທີ່ກ່ຽວຂ້ອງ;
9. ຮ້ອງຟ້ອງຕໍ່ສານກ່ຽວກັບການກະທຳຂອງກຳມະການບໍລິຫານທີ່ເປັນການລະເມີດຕໍ່ສິດ ແລະ ສ້າງຄວາມເສຍຫາຍ ແກ່ຜົນປະໂຫຍດຂອງຕົນ ກໍຄືຂອງກຸ່ມທີ່ຕົນເປັນສະມາຊິກ;
10. ເຂົ້າຮ່ວມກອງປະຊຸມ, ລົງຄະແນນສຽງ, ສະເໜີ ແລະ ປະກອບຄຳເຫັນດ້ານຕ່າງໆ ຮ່ວມທັງການນຳສະເໜີບັນຫາ ກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງກຸ່ມຕົນ;
11. ຮັກສາຄວາມສາມັກຄີລະຫວ່າງສະມາຊິກກຸ່ມດ້ວຍກັນ;
12. ສະເໜີໃຫ້ມີການກວດກາຊັບສົມບັດ ແລະ ບັນຊີການເງິນຂອງກຸ່ມໃນກໍລະນີທີ່ເຫັນວ່າ ມີຄວາມຈຳເປັນຕາມທີ່ໄດ້ກຳນົດໄວ້ ໃນລະບຽບຂອງກຸ່ມ.

ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ
ບ້ານ ດອນຕິ້ວ, ເມືອງ ໄຊທານີ, ແຂວງ ນະຄອນຫຼວງວຽງຈັນ
ຕູ້ໄປສະນີ: 001888; ໂທລະສັບ: 021– 732072
Fax: 021 - 732092

ພິມຄັ້ງທີ I

ຈຳນວນ 1,500 ຫົວ, ເດືອນ ພະຈິກ 2017